ຜົນສຳເລັດອັນສະຫງ່າງາມ! ຜ-ຟຟລ ໄດ້ຮັບ 4 ລາງວັນໃຫຍ່ ຈາກຕະຫຼາດຫຼັກຊັບລາວ ປະຈຳປີ 2025

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍສະແດງຄວາມພາກພູມໃຈ ແລະ ປະກາດຜົນສຳເລັດອັນຍິ່ງໃຫຍ່ ໃນການຢັ້ງຢືນເຖິງມາດຕະຖານການບໍລິຫານງານທີ່ດີເດັ່ນ ແລະ ຄວາມໂປ່ງໃສໃນເວທີຕະຫຼາດທຶນ.

ໃນປີ 2025 ນີ້, ຜ-ຟຟລ ສາມາດຍາດໄດ້ລາງວັນອັນຊົງກຽດຈາກ ຕະຫຼາດຫຼັກຊັບລາວ (LSX) ເຖິງ 4 ລາງວັນ ດ້ວຍກັນ ຄື:

1. ໂລລາງວັນ ການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ 2025 (Best Voluntary Disclosure Awards 2025)

ໂດຍລາງວັນດັ່ງກ່າວ ເປັນການສະແດງໃຫ້ເຫັນເຖິງຄວາມຕື່ນຕົວ ແລະ ຄວາມຈິງໃຈໃນການສະໜອງຂໍ້ມູນຂ່າວສານໃຫ້ແກ່ສັງຄົມ ແລະ ຜູ້ຖືຫຸ້ນຢ່າງຮອບດ້ານ.

2. ລາງວັນ ຜູ້ລົງທຶນສຳພັນດີເດັ່ນ 2025 (Best Investor Relation Awards 2025)

ເປັນລາງວັນທີ່ ຢັ້ງຢືນເຖິງຄວາມເປັນມືອາຊີບໃນການສ້າງສາຍສຳພັນ ແລະ ການເບິ່ງແຍງນັກລົງທຶນຢ່າງມີປະສິດທິພາບ.

3. ໃບຍ້ອງຍໍ ການເປີດເຜີຍຂໍ້ມູນປະຈຳປີ 2025 (Disclosure Award 2025)

ເປັນລາງວັນທີ່ຢັ້ງຢືນມາດຕະຖານການລາຍງານຂໍ້ມູນທີ່ຖືກຕ້ອງ, ຄົບຖ້ວນ ແລະ ທັນການ ຕາມລະບຽບການຂອງຕະຫຼາດຫຼັກຊັບ.

4. ໃບຍ້ອງຍໍ ການຄຸ້ມຄອງບໍລິຫານດີເດັ່ນ ປະເພດ 4 ດາວ ປະຈຳປີ 2025 (Corporate Governance Award 2025)

ເປັນ ລາງວັນແຫ່ງຄວາມພາກພູມໃຈໃນການບໍລິຫານງານຕາມຫຼັກທຳມາພິບານ ທີ່ດີເດັ່ນໃນລະດັບ 4 ດາວ, ສະທ້ອນເຖິງຄວາມໝັ້ນຄົງ ແລະ ການເຕີບໂຕຢ່າງຍືນຍົງຂອງບໍລິສັດ.

ຜົນສຳເລັດໃນຄັ້ງນີ້ ບໍ່ພຽງແຕ່ເປັນຄວາມພາກພູມໃຈຂອງຄະນະຜູ້ບໍລິຫານ ແລະ ພະນັກງານ ຜ-ຟຟລ ທຸກຄົນເທົ່ານັ້ນ, ແຕ່ຍັງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ວ່າພວກເຮົາແມ່ນບໍລິສັດທີ່ມີການບໍລິຫານຈັດການທີ່ມີມາດຕະຖານສາກົນ ແລະ ມີຄວາມຮັບຜິດຊອບສູງ.

ພວກເຮົາຂໍຂອບໃຈມາຍັງ ຕະຫຼາດຫຼັກຊັບລາວ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບັນດາຜູ້ຖືຫຸ້ນ ແລະ ຄູ່ຮ່ວມທຸລະກິດທຸກພາກສ່ວນ ທີ່ໃຫ້ການສະໜັບສະໜູນ ແລະ ໄວ້ວາງໃຈພວກເຮົາຕະຫຼອດມາ.

ຜ-ຟຟລ ຈະສືບຕໍ່ພັດທະນາ ແລະ ຮັກສາມາດຕະຖານອັນດີເດັ່ນນີ້ໄວ້ ເພື່ອສ້າງຄຸນຄ່າໃຫ້ແກ່ເສດຖະກິດຂອງຊາດຢ່າງຍືນຍົງ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ